**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສາທາລະນະສຸກແຂວງ

ເລກທີ 1516 /ສທຂ

ແຂວງສະຫວັນນະເຂດ,ວັນທີ 01 ເມສາ 2026

# ແຈ້ງເຊີນ

**ເຖິງ: ບໍລິສັດ ກໍ່ສ້າງ (ພາຍໃນແຂວງສະຫວັນນະເຂດ ແລະ ຕ່າງແຂວງ).**

**ເລື່ອງ: ເຂົ້າຮ່ວມການປະມູນໂຄງການ ກໍ່ສ້າງ ອ່າງເກັບນ້ຳ ແລະ ສ້ອມແປງໂຮງໝໍ ເມືອງ ນອງ (ສືບຕໍ່ໂຄງການທີ່ ລົບລ້າງ-ຍົກເລີກສັນຍາ).**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກສາທາລະນະສຸກແຂວງສະຫວັນນະເຂດ, ສະບັບເລກທີ 1492/ສທ, ລົງວັນທີ 10 ກໍລະກົດ 2023;
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງ, ສະບັບເລກທີ 453/ກງຂ, ລົງວັນທີ 20 ກຸມພາ 2026, ເລື່ອງ: ແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2026 (ໂຄງການປະເພດ V ມູນຄ່າ 50 ຕື້ກີບ ລົງມາແຂວງຈັດສັນ);

1. ພະແນກສາທາລະນະສຸກແຂວງສະຫວັນນະເຂດ ໄດ້ຮັບທຶນ: **ງົບປະມານການລົງທຶນຂອງລັດ**
2. ການປະມູນສົມທຽບລາຄາ ຈະດຳເນີນຕາມຂັ້ນຕອນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນາເພີ້ມເຕີມສາລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019.
3. ບໍລິສັດ ທີ່ສົນໃຈສາມາດຕິດຕໍ່ພົວພັນ ລົງທະບຽນຊື້ຊອງປະມູນທີ່ **ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງສະຫວັນນະເຂດ**, ໃນໂມງລັດຖະການ, ນັບແຕ່ວັນທີ: 01 ເມສາ 2026 ເປັນຕົ້ນໄປ ເຖິງ ວັນທີ 30 ເມສາ 2026 ເປັນມື້ປິດຂາຍຊອງປະມູນ.
4. ເງື່ອນໄຂຂອງ ບໍລິສັດ ໃນການພົວພັນຊື້ຊອງປະມູນ ປະກອບມີ: ທະບຽນວິສາຫະກິດອອກຊື່ ບໍລິສັດ, ໃບອະນຸຍາດດຳເນີນທຸລະກິດ 2025-2026, ໃບຢັ້ງຢືນການຊຳລະອາກອນ 2025-2026.
5. ຊອງປະມູນຕ້ອງສົ່ງທີ່ ຫ້ອງປະຊຸມພະແນກສາທາລະນະສຸກແຂວງ, ກ່ອນເວລາ 9:00 ໂມງ ຂອງ ວັນທີ 05 ພຶດສະພາ 2026 ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 9:30 ໂມງ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ.

**ຫົວໜ້າພະແນກສາທາລະນະສຸກແຂວງ**

**ດຣ. ຈັນທະລາ ພານີສິດ**

ຕິດຕໍ່ພົວພັນ:

ທ່ານ ລຳໄພ ຂັນທະລີ 020 2288 4868, 020 9883 3884